**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງວຽງຈັນ

ພະແນກກະສິກຳ ແລະ ປ່າໄມ້

ເລກທີ 2380/ກປຂ.ວຈ

ທີ່, ແຂວງວຽງຈັນ, ວັນທີ 17 ພຶດສະພາ/2024

# ໜັງສືແຈ້ງເຊີນເຂົ້າຮ່ວມປະມູນ

- ອີງຕາມ ບົດບັນທຶກຄວາມເຂົ້າໃຈ ລະຫວ່າງກົມພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ປ່າໄມ້ ກັບ ອົງການກອຍກາ ປະຈຳສປປ ລາວ ໃນຄັ້ງວັນທີ 18 ພະຈິກ 2021, ຊຶ່ງໄດ້ຮັບການຊ່ວຍເຫຼືອລ້າຈາກລັດຖະບານ ສ. ເກົາຫລີ ຜ່ານອົງການກອຍກາ;
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງໆ ວຽງຈັນ ສະບັບເລກທີ 1666/ຈຂ.ວຈ ລົງວັນທີ 8 ທັນວາ 2023 ວ່າດ້ວຍ ການແຕ່ງຕັ້ງຄະນະຈັດຊື້-ຈັດຈ້າງ, ທາບທາມສົມທຽບລາຄາ ແລະ ການປະມູນໂຄງການຂັ້ນແຂວງ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບທຶນຊ່ວຍເຫລືອລ້າ ຈາກລັດຖະບານ ສ. ເກົາຫລີ ຜ່ານອົງການກອຍກາ ເພື່ອປະຕິບັດໂຄງການ ສ້າງແຜນກິດຈະກຳພັດທະນາຊົນນະບົດເພື່ອສ້າງລາຍຮັບໃຫ້ຊົນນະບົດ ເຂດພາກເໜືອ ແລະ ພາກກາງ ສປປ ລາວ. ໂດຍສະເພາະແຂວງວຽງຈັນໄດ້ຮັບງົບປະມານໂຄງການກໍ່ສ້າງສູນສົ່ງເສີມພັດທະນາຊົນນະບົດຂອງ ແລະ ປັບປຸງສະຖານີເຕັກນິກ(ເມືອງກາສີແລະເມືອງແມດ). ສະນັ້ນ, ພະແນກກະສິກຳ ແລະ ປ່າໄມ້ ແຂວງວຽງຈັນຈຶ່ງຂໍຖືເປັນກຽດຮຽນເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະມີເງື່ອນໄຂເໝາະສົມເຂົ້າຮ່ວມການປະມູນໂຄງການກໍ່ສ້າງສູນສົ່ງເສີມພັດທະນາຊົນນະບົດ, ລະບົບນ້ຳເຂົ້າຟາມສາທິດ, ໂຮງເຮືອນກ້າເບ້ຍ, ເຮືອນຮົ່ມທີ່ສູນພັດທະນາຊົນນະບົດແຂວງ, ເຮືອນຮົ່ມແລະລົກໄກ່ທີ່ສະຖານີເຕັກນິກ(ເມືອງກາສີແລະເມືອງແມດ), ຊຶ່ງການປະມູນໂຄງການດັ່ງກ່າວ ແມ່ນມີເນື້ອໃນ ດັ່ງນີ້:

1. ການປະມູນຈະໃຊ້ຮູບແບບການປະມູນເປີດກວ້າງແບບສອງຂັ້ນຕອນ ຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019; ຊຶ່ງໄດ້ກຳນົດໄລຍະດຳເນີນຂະບວນການຈັດຊື້-ຈັດຈ້າງ ຄື:
   - ປະກາດແຈ້ງເຊີນ ໃຫ້ຜູ້ທີ່ມີຄວາມສົນໃຈມາຮັບເອົາເອກະສານດ້ານຄຸນນະວຸດ ເລີ່ມແຕ່ວັນທີ 20 ພຶດສະພາ (5) ປີ 2024 ເປັນຕົ້ນໄປ;
   - ປິດຮັບເອກະສານດ້ານຄຸນນະວຸດ ເວລາ 15:00ໂມງ ຂອງວັນທີ 03 ມິຖຸນາ(6) ປີ 2024 ແລະ ຈະກວດກາດ້ານຄຸນນະວຸດ ໃນໄລຍະເວລາ 7 ວັນ;
   - ແຈ້ງໃຫ້ບໍລິສັດທີ່ຜ່ານດ້ານຄຸນນະວຸດ ໃນວັນທີ 10ເດືອນມິຖຸນາ(6) ປີ 2024 ເພື່ອໃຫ້ມາຮັບເອົາ ຮ່າງໃບປະເມີນລາຄາ ແລະ ແບບແຕ້ມ ໄປໃສ່ລາຄາ ເພື່ອຍື່ນເຂົ້າປະມູນ;

- ປິດຮັບຊອງປະມູນ ເວລາ 09.00 ໂມງ ຂອງວັນທີ 25ເດືອນມິຖຸນາ(6) ປີ 2024;
- ເປີດຊອງປະມູນ ເວລາ 09.30 ໂມງ ຂອງວັນທີ 25 ເດືອນມິຖຸນາ(6) ປີ 2024 ຢູ່ສະຖານທີ່ ທີ່ກຳນົດໄວ້ໃນຂໍ້ 4 ລຸ່ມນີ້.

**ໝາຍເຫດ:** 1)ການຮັບ-ສົ່ງເອກະສານ ຈະບໍ່ອານຸຍາດຮັບ-ສົ່ງດ້ວຍລະບົບເອເລັກໂທຣນິກ, 2)ການຮັບເອກະສານ-ສົ່ງເອກະສານ ຈະມີການບັນທຶກລາຍຊື່ເພື່ອປະກອບເປັນເອກະສານລາຍງານ; 3)ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ; 4)ຊອງປະມູນດ້ານຄຸນນະວຸດຈະຖືກກວດສອບໂດຍຄະນະກຳມະການຈັດຊື້-ຈັດຈ້າງ ແລະ ແຈ້ງໃຫ້ຜູ້ເຂົ້າຮ່ວມປະມູນຮັບຊາບຜົນຕາມກຳນົດເວລາ; 5)ຊອງປະມູນດ້ານລາຄາຈະເປີດຕໍ່ສາທາລະນະໂດຍຊ່ອງໜ້າຄະນະກຳມະການຈັດຊື້-ຈັດຈ້າງ ແລະ ຜູ້ເຂົ້າແຂ່ງຂັນປະມູນ ຫລືຜູ້ຖືກແຕ່ງຕັ້ງ ຢູ່ສະຖານທີ່ງກຳນົດໄວ້ຂ້າງລຸ່ມ;

2. ເງື່ອນໄຂດ້ານຄຸນນະວຸດ:
   - ຕ້ອງແມ່ນບໍລິສັດຖືກຕ້ອງຕາມກົດໝາຍ, ມີສິດດຳເນີນທຸລະກິດການກໍ່ສ້າງໃນ ສປປ ລາວ;
   - ມີການມອບພັນທະອາກອນ ປະຈຳປີ 2023;
   - ເປັນບໍລິສັດທີ່ເຄີຍຮັບວຽກກໍ່ສ້າງ/ປັບປຸງອາຄານ ທີ່ມີມູນຄ່າສັນຍາຫລາຍກວ່າ300.000 ໂດລາສະຫະລັດ ຈຳນວນ 3 ສັນຍາ ຂຶ້ນໄປ ໃນໄລຍະ 7 ປີ ຜ່ານມາ (2017-2024) ແລະ ຕ້ອງມີໃບຢັ້ງຢືນຈາກເຈົ້າຂອງໂຄງການ;
   - ຕ້ອງມີເງິນໝູນວຽນໃນບັນຊີຢ່າງໜ້ອຍ150.000ໂດລາສະຫະລັດຂຶ້ນໄປຫລື ມີອັດຕາສ່ວນໜີ້ສິນໜ້ອຍກວ່າ130% ທີ່ໄດ້ຈາກການຢັ້ງຢືນຂອງທະນາຄານ ຫລື ສະຖາບັນການເງິນໃດໜຶ່ງ ຊຶ່ງເອກະສານດັ່ງກ່າວ ຕ້ອງອອກໃນໄລຍະຫລັງຈາກວັນທີ່ໄດ້ແຈ້ງເຊີນປະມູນນີ້;
   - ຕ້ອງມີທີມງານວິຊາການທີ່ມີປະສົບການທີ່ແນ່ນອນ ຊຶ່ງບັນຊີພະນັກງານທີ່ໄດ້ຍື່ນມາ ຕ້ອງມີຢ່າງນ້ອຍ 2 ທ່ານ ແລະ ທັງ 2 ທ່ານຕ້ອງມີເງື່ອນໄຂ ແລະ ຜ່ານການປະເມີນ ເຊັ່ນ: ຫົວໜ້າວິຊາການພາກສະໜາມຕ້ອງມີປະສົບການກ່ຽວຂ້ອງຢ່າງໜ້ອຍ 10 ປີ, ວິຊາການພາກສະໜາມ 1 ທ່ານ ຕ້ອງມີປະສົບການກ່ຽວຂ້ອງ ຢ່າງໜ້ອຍ 5 ປີ.
3. ບໍລິສັດທີ່ຕ້ອງການເຂົ້າຮ່ວມການປະມູນ ສາມາດພົວພັນເອົາເອກະສານດ້ວຍຕົນເອງ ຫຼື ມອບໃຫ້ຜູ້ຕາງໜ້າມາແທນ ແຕ່ຕ້ອງມີໃບມອບສິດຈາກບໍລິສັດ ແລະ ໃຫ້ສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດຫຼືໃບທະບຽນວິສາຫະກິດມາພ້ອມ; ກຳນົດຂາຍຊອງປະມູນໃນລາຄາ 2.000.000 ກີບຕໍ່ຊອງ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ການຊຳລະຕ້ອງຈ່າຍເປັນເງິນສົດ;
4. ສະຖານທີ່ຊື້ຊອງປະມູນ-ເປີດຊອງປະມູນ ແລະ ທີ່ຕັ້ງໂຄງການ: ຢູ່ຂະແໜງພັດທະນາຊົນນະບົດ, ພະແນກກະສິກຳ ແລະ ປ່າໄມ້ ແຂວງແຂວງວຽງຈັນ; ບ້ານປາກແຈ້ງ, ເມືອງວຽງຄຳ, ແຂວງວຽງຈັນ;

**ຕິດຕໍ່ພົວພັນ:** ທ່ານ ໄນວາ ແສ່ເຕີນ ຜູ້ປະສານງານໂຄງການຂັ້ນແຂວງ;
ໂທລະສັບ: 020 55711997; Email:naivasaetern@gmail.com;
ເລີ່ມແຕ່ ວັນທີ 20 ພຶດສະພາ(5) ປີ 2024 ເປັນຕົ້ນໄປໃນໂມງລັດຖະການ;

ຜູ້ຮອງ **ຫົວໜ້າພະແນກ**

ເຊັນແທນ

ຄຳສາຍ ສຸມຸນທອງ